**Please print the letter below and photocopy onto school letterhead before distribution**

ຈົດໝາຍເຖິງພໍ່ແມ່ ກ່ຽວກັບເຫດການຕ່າງໆທີ່ເກີດຂຶ້ນໃນຊຸມຊົນເມື່ອໄວໆມານີ້
Letter to parents regarding recent community events

ເຖິງ ພໍ່ແມ່/ຜູ້ປົກຄອງ ທີ່ຮັກແພງ

ໃນການຕອບຮັບຕໍ່ເຫດການຕ່າງໆທີ່ເກີດຂຶ້ນໃນຊຸມຊົນເມື່ອໄວໆມານີ້ ທາງໂຮງຮຽນຂອງທ່ານ ໄດ້ເຮັດຕາມຂັ້ນຕອນຕ່າງໆດັ່ງຕໍ່ລົງໄປນີ້.

ໄດ້ເຮັດໃຫ້ບັນດານັກຮຽນມີຄວາມໝັ້ນໃຈວ່າ ໂຮງຮຽນຈະເປັນສະຖານທີ່ທີ່ມີສະພາບແວດລ້ອມອັນປອດພັຍສຳລັບໝົດທຸກຄົນສືບຕໍ່ໄປ. ໄດ້ເຕືອນຄວາມຈຳຂອງບັນດານັກຮຽນເຖິງບໍຣິການສວັດດີການທີ່ມີໄວ້ໃຫ້ສຳລັບນັກຮຽນ ແລະ ນະໂຍບາຍຕໍ່ຕ້ານການດູຖູກຜິວພັນຊຶ່ງເຮັດໃຫ້ແນ່ໃຈວ່າພວກເຂົາຈະໄດ້ຮັບການອູ້ມຊູຖ້າວ່າພວກເຂົາປະສົບກັບການກໍ່ກວນໃຫ້ລຳບາກໃຈເປັນການສ່ວນຕົວ.

ໄດ້ໃຫ້ໂອກາດແກ່ນັກຮຽນໃຫ້ໂອ້ລົມກ່ຽວກັບຄວາມຮູ້ສຶກຂອງພວກເຂົາ ແລະ ໄດ້ເຕືອນຄວາມຈຳໃຫ້ພວກເຂົາຮູ້ວ່າພວກເຂົາສາມາດເຂົ້າຫາຜູ້ໃຫ້ຄຳປຶກສາຫາລືຂອງໂຮງຮຽນ ຫຼື ພະນັກງານອື່ນໆຂອງໂຮງຮຽນໄດ້ຖ້າພວກເຂົາມີຄວາມກັງວົນ ຫຼື ເສັຍໃຈ. ການອູ້ມຊູນີ້ຈະມີໃຫ້ໄປຕລອດແກ່ນັກຮຽນຜູ້ທີ່ຕ້ອງການ.

ມັນຈະເປັນປໂຍດ ຖ້າທ່ານສາມາດໂອ້ລົມກັບລູກໆຂອງທ່ານກ່ຽວກັບເຫດການຕ່າງໆເຫຼົ່ານີ້ ແລະ ຊຸກຍູ້ໃຫ້ພວກເຂົາມີຄວາມອົດກັ້ນ ແລະ  ມີຄວາມເມດຕາເປັນຫ່ວງນຳຄົນອື່ນທັງຢູ່ໃນໂຮງຮຽນ ແລະ ໃນຊຸມຊົນທົ່ວໄປ.

ການດຳເນີນສືບຕໍ່ໃນສິ່ງທີ່ເຮັດເປັນປະຈຳແລະຄວາມສົນໃຈຢູ່ໃນເຮືອນເປັນສິ່ງທີ່ມີປໂຍດສຳລັບເດັກທີ່ປະເຊີນກັບສະພາບການທີ່ລຳບາກ.

ກະຣຸນາຕິດຕໍ່ຫາທາງໂຮງຮຽນຖ້າທ່ານມີຄວາມກັງວົນສະເພາະໃດໆສຳລັບລູກຂອງທ່ານ ແລະ  ການ ຊ່ວຍເຫຼືອກໍຈະຖືກຈັດໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້.

ຖ້າທ່ານຕ້ອງການນາຍພາສາເພື່ອ ຊ່ວຍທ່ານໃນການຕິດຕໍ່ຫາທາງໂຮງຮຽນ ກະຣຸນາໂທຣະສັບຫາບໍຣິການນາຍພາສາທາງໂທຣະສັບ ຕາມໝາຍເລກ 131 450 ແລະຂໍເອົານາຍພາສາທີ່ປາກພາສາລາວ. ຜູ້ຮັບສາຍຈະຫາເອົານາຍພາສາມາເວົ້າສາຍເພື່ອຊ່ວຍໃນການໂອ້ລົມຂອງທ່ານ. ທ່ານບໍ່ຕ້ອງເສັຍຄ່າໃດໆໃນບໍຣິການນີ້.

ດ້ວຍຄວາມນັບຖື

ທ່ານຄູໃຫຍ່ (Principal)